**ມິຊຊາອາທິດທີ 6 ກຳມະດາ**

**ວັນທີ 12 ກຸມພາ 2023**



**ພຣະວໍລະສານໂດຍນັກບຸນມັດເທວ 5, 17-37**

ໃນເວລານັ້ນ, ພຣະເຢຊູເຈົ້າກ່າວກັບພວກສາວົກວ່າ: "ຖ້າພວກເຈົ້າບໍ່ເປັນຄົນຊອບທຳກວ່າພວກນັກກົດໝາຍແລະພວກຟາຣີເຊວແລ້ວ, ພວກເຈົ້າກໍຈະບໍ່ໄດ້ເຂົ້າໃນອານາຈັກສະຫວັນເລີຍ".

ພວກເຈົ້າໄດ້ຍິນຄວາມທີ່ກ່າວໄວ້ກັບຄົນໂບຮານວ່າ: "ຢ່າຂ້າຄົນ, ຖ້າຜູ້ໃດຂ້າຄົນ ຜູ້ນັ້ນກໍຈະຖືກຕັດສິນລົງໂທດ". ສ່ວນເຮົາ, ເຮົາບອກພວກເຈົ້າວ່າ: "ຜູ້ໃດຄຽດຊັງພີ່ນ້ອງຂອງຕົນເອງ ຜູ້ນັ້ນກໍຈະຖືກຕັດສິນ".

ພວກເຈົ້າໄດ້ຍິນຄວາມທີ່ກ່າວໄວ້ກັບຄົນໂບຮານວ່າ: "ຢ່າລ່ວງປະເວນີກັບເມຍຜູ້ອື່ນ". ສ່ວນເຮົາ, ເຮົາບອກພວກເຈົ້າວ່າ: "ຊາຍໃດຕັ້ງໃຈເບິ່ງຜູ້ຍິງດ້ວຍຄວາມປາດຖະໜາຊົ່ວ ເຂົາກໍໄດ້ລ່ວງປະເວນີໃນໃຈກັບຍິງນັ້ນແລ້ວ".

ພວກເຈົ້າຍັງໄດ້ຍິນຄຳທີ່ກ່າວໄວ້ກັບຄົນໂບຮານວ່າ: "ຢ່າສາບານບໍ່ຈິງ ແຕ່ຈົ່ງຖືຕາມຄຳປະຕິຍານທີ່ທຳໄວ້ກັບພຣະອົງເຈົ້າ". ສ່ວນເຮົາ, ເຮົາບອກພວກເຈົ້າວ່າ: "ຢ່າສາບານເລີຍ".

ເມື່ອເຈົ້າເວົ້າວ່າ "ແມ່ນ" ກໍໃຫ້ແມ່ນອີຫລີ. ຖ້າເຈົ້າເວົ້າວ່າ "ບໍ່ແມ່ນ" ກໍໃຫ້ບໍ່ແມ່ນອີຫລີ. ຖ້າເວົ້າລື່ນນັ້ນກໍແມ່ນມາຈາກພະຍາມານ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວາຈາພຣະເຈົ້າວັນນີ້ຍັງຢູ່ໃນບໍລິບົດຂອງຄໍາເທດສອນຂອງພຣະເຢຊູເຈົ້າເທິງພູເຂົາກ່ຽວກັບບຸນມະຫາລາບແປດປະການ. ໃນພຣະທໍາເກົ່າ, ໂມເຊໄດ້ຂຶ້ນໄປເທິງພູເຂົາຊີນາຍເພື່ອນໍາເອົາວາຈາພຣະເຈົ້າສິບຄໍາຫລືພຣະບັນຍັດສິບປະການນັ້ນລົງມາ ເພື່ອສິດສອນໃຫ້ປະຊາກອນອິສຣາແອນຮູ້ເຖິງນໍ້າພຣະໄທພຣະເຈົ້າ. ສ່ວນວັນນີ້ແມ່ນພຣະເຢຊູເຈົ້າຜູ້ເປັນໂມເຊຄົນໃໝ່, ພຣະອົງບໍ່ໄດ້ຂຶ້ນໄປເທິງພູເຂົາເພື່ອນໍາວາຈາພຣະເຈົ້າລົງມາ, ແຕ່ພຣະອົງເອງເປັນວາຈາພຣະເຈົ້າທີ່ລົງມາຮັບເອົາກາຍເປັນມະນຸດ. ຫລືເວົ້າອີກຢ່າງ, ພຣະອົງເອງແມ່ນວາຈາພຣະເຈົ້າ. ເພາະພຣະອົງແມ່ນພຣະເຈົ້າ. ດ້ວຍເຫດນີ້ຄໍາສອນຂອງພຣະອົງຈຶ່ງມີອໍານາດແລະແຕກຕ່າງຈາກຄໍາສອນຂອງຄົນອື່ນ. ແລະເປັນຕົ້ນຄໍາສອນຂອງພຣະອົງທໍາໃຫ້ພຣະທໍາບັນຍັດແລະຄໍາທໍານາຍຂອງບັນດາປະພາສົກໃນພຣະທໍາເກົ່າສົມບູນຂຶ້ນແລະຈົບສິ້ນລົງໃນຕົວຂອງພຣະອົງ.

ດັ່ງທີ່ພຣະເຢຊູເຈົ້າກ່າວກັບພວກສາວົກໃນວາຈາພຣະເຈົ້າວັນນີ້ວ່າ: *"ພວກເຈົ້າໄດ້ຍິນຂໍ້ຄວາມກ່າວໄວ້ກັບຄົນໂບຮານວ່າ..."*. ສ່ວນເຮົາ *"ເຮົາບອກພວກເຈົ້າວ່າ.."*. ຄໍາເວົ້ານີ້ຂອງພຣະເຢຊູເຈົ້າບໍ່ໝາຍວ່າພຣະອົງມາເພື່ອປ່ຽນແປງຫລືລຶບລ້າງພຣະທໍາບັນຍັດ, ແຕ່ພຣະອົງມາເພື່ອທໍາໃຫ້ພຣະທໍາບັນຍັດນັ້ນມີຄວາມໝາຍເລິກເຊິ່ງແລະສົມບູນຂຶ້ນ. ເພາະແຕ່ກ່ອນ, ວາຈາພຣະເຈົ້າໄດ້ຖືກຈາລຶກໄວ້ໃນແຜ່ນຫີນ, ແຕ່ດຽວນີ້ວາຈາພຣະເຈົ້າໄດ້ເປັນຈິງໃນຊີວິດຂອງພຣະເຢຊູເຈົ້າ. ແລະຜູ້ໃດຫາກນໍາເອົາວາຈາພຣະອົງມາປະຕິບັດໃນຊີວິດ, ຜູ້ນັ້ນກໍຈະໄດ້ພົບກັບຊີວິດຂອງພຣະເຈົ້າໃນຕົວຂອງເຂົາ ຄືເຂົາຈະກາຍເປັນຜູ້ສັກສິດເໝືອນກັບພຣະອົງ. ດ້ວຍເຫດນີ້, ໃນຕອນທ້າຍຂອງຄໍາເທດສອນຂອງພຣະເຢຊູເຈົ້າ, ພຣະອົງຈຶ່ງກ່າວວ່າ: *"ຈົ່ງເປັນຜູ້ດີບໍລິບູນ ເໝືອນພຣະບິດາຂອງພວກເຈົ້າຜູ້ສະຖິດຢູ່ສະຫວັນຊົງເປັນຜູ້ດີບໍລິບູນນັ້ນແລ"* (ມທ 5, 48). ໝາຍວ່າຈຸດປະສົງຂອງຄໍາເທດສອນຂອງພຣະເຢຊູເຈົ້າບໍ່ພຽງແຕ່ທໍາໃຫ້ພວກເຮົາພົບກັບຄວາມສຸກແທ້ຈິງໃນຊີວິດເທົ່ານັ້ນ, ແຕ່ຍັງຊ່ວຍພວກເຮົາໃຫ້ຄ້າຍຄືກັບພຣະບິດາເຈົ້າຍິ່ງຂຶ້ນ ຄືເປັນຜູ້ສັກສິດ, ຜູ້ດີບໍລິບູນນັ້ນແລ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດຊ່ວຍລູກໃຫ້ພົບກັບຄວາມສຸກໃນວາຈາຂອງພຣະອົງ. ເພື່ອລູກຈະໄດ້ນໍາວາຈາພຣະອົງມາປະຕິບັດໃນຊີວິດຂອງລູກ. ເພື່ອລູກຈະໄດ້ເປັນເໝືອນພຣະອົງຄືເປັນຜູ້ສັກສິດນັ້ນແລ. ອາແມນ

ຄຸນພໍ່ ອັງຕອນ ກຽດຕິສັກ